# ບັນດາພະຍາດແມ່ກາຝາກ ທີ່ຕິດມາຈາກດິນ

ແມ່ທ້ອງໂຕກົມ, ແມ່ທ້ອງປາກຂໍ, ແມ່ທ້ອງແສ້ມ້າ



# ມີແມ່ທ້ອງ ຊະນິດໃດແດ່ ?





## ແມ່ທ້ອງໂຕກົມ

ແມ່ທ້ອງກົມອາໃສຢູ່ລຳໄສ້ອ່ອນ, ມັນ ສາມາດເຕີບໃຫຍ່ ແລະ ມີຄວາມຍາວ ຫຼາຍກວ່າ 200 ມມ. ຖ້າມີແມ່ທ້ອງໂຕກົມ ຈຳນວນຫຼາຍ ສາມາດເຮັດໃຫ້ ລຳໄສ້ຕັນໄດ້ .



## ແມ່ທ້ອງແສ້ມ້າ

ແມ່ທ້ອງແສ້ມ້າ ມີຄວາມຍາວປະມານ 40 ມມ . ຖ້າມີແມ່ທ້ອງແສ້ມ້າ ຈຳນວນ ຫຼາຍຈະມີຜົນຢ່າງຮ້າຍແຮງ ສາມາດເຮັດ ໃຫ້ທ້ອງອືດ ແລະ ເປັນ ຖອກທ້ອງນຳອີກ ດ້ວຍ .



ຮູບຖ່າຍໂດຍອີເລັກໂທຣນິກສະແກນ

## ແມ່ທ້ອງປາກຂໍ

ແມ່ທ້ອງປາກຂໍ ມີຄວາມຍາວປະມານ 10 ມມ. ຖ້າມີແມ່ທ້ອງປາກຂໍຈຳນວນຫຼາຍ ສາມາດເຮັດໃຫ້ຄົນເຈັບມີອັນຕະລາຍ ຮ້າຍ ແຮງໄດ້. ພາໃຫ້ເດັກຂາດອາຫານ . ນຳຜູ້ໃຫຍ່, ໂດຍສະເພາະນຳແມ່ມານ ສາມາດເຮັດໃຫ້ເລືອດຈາງຢ່າງຮ້າຍແຮງ





# ພວກມັນອາໃສຢູ່ບ່ອນ ໃດແດ່ ?

ແມ່ທ້ອງໂຕກົມ, ແມ່ທ້ອງປາກຂໍ ແລະ ແມ່ທ້ອງແສ້ມ້າ ອາໃສຢູ່ໃນ ລຳໃສ້ຂອງຄົນເຮົາ ຊຶ່ງເປັນບ່ອນທີ່ ພວກມັນຈະເລີນເຕີບໃຫຍ່ ຂະຫຍາຍໂຕ, ແຕ່ວ່າພວກມັນ ແມ່ນ ໄດ້ເລີ່ມມາຈາກນອກຮ່າງກາຍຂອງ ຄົນເຮົາມາກ່ອນ .



# ແມ່ທ້ອງໂຕກົມ ແລະ ແມ່ທ້ອງແສ້ມ້າ ຕິດຕໍ່ໃສ່ຄົນເຮົາໄດ້ແນວໃດ ?



ເມື່ອມີຄົນເປັນພະຍາດແມ່ທ້ອງໂຕກົມ ແລະ ແມ່ທ້ອງແສ້ມ້າ ໄປຖ່າຍອາຈົມຊະຊາຍໃສ່ດິນ, ແລ້ວໄຂ່ຂອງແມ່ທ້ອງດັ່ງກ່າວ ກໍຈະຕິດ ແລະ ຕົກອອກມາພ້ອມກັບອາຈົມຂອງຄົນຜູ້ນັ້ນ .



ຖ້າຄົນມີແມ່ທ້ອງດັ່ງກ່າວ ບໍ່ໄດ້ຖ່າຍໃສ່ວິດ ແຕ່ຫາກໄປຖ່າຍຊະຊາຍ ( ຕາມພຸ່ມໄມ້, ຕາມຕົ້ນໜໍ່ກ້ວຍ, ຖ່າຍໃສ່ສວນ ຫຼື ຖ່າຍໃສ່ຕາມທົ່ງ ໄຮ່ທົ່ງນາ ), ໄຂ່ຂອງແມ່ທ້ອງໂຕກົມ ແລະ ແມ່ທ້ອງແສ້ມ້າ ກໍຈະແປດເປື້ອນໃສ່ດິນບໍລິເວນທີ່ຖ່າຍອາຈົມຊະຊາຍ .



ແມ່ທ້ອງໂຕກົມ, ແມ່ທ້ອງແສ້ມ້າ ແລະ ແມ່ທ້ອງປາກຂໍ ສາມາດແປະເປື້ອນຕໍ່ເຄື່ອງປູກຂອງຝັງ ເມື່ອຫາກເຮົານຳເອົາອາຈົມມາໃຊ້ເຮັດຝຸ່ນ



ເຄື່ອງປູກ ກໍຈະງອກງາມ ເຊັ່ນຜັກຕ່າງ ໆ ແຕ່ວ່າຢູ່ຕາມກ້ານກິ່ງໃບ ຂອງຜັກເລົ່ານີ້ກໍຈະເຕັມໄປດ້ວຍໄຂ່ແມ່ທ້ອງດັ່ງກ່າວ .





ປະຊາຊົນຜູ້ອື່ນ ໆ ພາຍໃນບ້ານ ແລະໂດຍສະເພາະເດັກນ້ອຍ ທີ່ຫຼິ້ນຕາມເດີນ ກໍຈະແປດເປື້ອນເຕັມໄປດ້ວຍໄຂ່ແມ່ທ້ອງດັ່ງກ່າວ



ຕາມຕີນມື ຂອງພວກເດັກນ້ອຍເລົ່ານີ້ ກໍຈະເຕັມໄປດ້ວຍໄຂ່ແມ່ທ້ອງ ຊຶ່ງເປັນໜ່ວຍ ນ້ອຍ ໆ ຊຶ່ງເຮົາບໍ່ສາມາດແນມເບິ່ງເຫັນດ້ວຍຕາເປົ່າ .



ຄົນເຮົາຈຳນວນໜຶ່ງ ກໍໄດ້ກືນກິນໄຂ່ແມ່ທ້ອງພວກນີ້ ຊຶ່ງບໍ່ໄດ້ສຳນຶກວ່າໄຂ່ແມ່ທ້ອງດັ່ງກ່າວ ໄດ້ຕິດຢູ່ກັບອາຫານການກິນ ຊຶ່ງຕົນ ເອງໄດ້ກິນເຂົ້າໄປ . ເມື່ອໄຂ່ແມ່ທ້ອງພວກນີ້ເຂົ້າໄປເຖິງລຳໄສ້ແລ້ວ ພວກມັນກໍຈະເລີນເຕີບໃຫຍ່ຂະຫຍາຍໂຕ ເປັນແມ່ທ້ອງໂຕແກ່ . ແລະ ອີກຢ່າງ ໜຶ່ງພວກຄົນທີ່ກືນກິນໄຂ່ດັ່ງກ່າວ ກໍແມ່ນໄດ້ຖືກຕິດພະຍາດແມ່ທ້ອງກາຝາກລຳໄສ້ແລ້ວ .

# ແມ່ທ້ອງປາກຂໍ ຕິດຕໍ່ໄດ້ແນວໃດ ?

ເຊັ່ນດຽວກັນກັບ ພວກກາຝາກແມ່ທ້ອງຊະນິດອື່ນ ໆ , ແມ່ທ້ອງປາກຂໍຕິດຕໍ່ໄດ້ ໂດຍທີ່ຄົນເຮົາໄປຖ່າຍໜັກຢ່າງຊະຊາຍຕາມດິນ ແລະ ບໍ່ຖ່າຍໃສ່ວິດຖ່າຍ ( ສ້ວມຖ່າຍ )





ຢູ່ຕາມດິນ ຈະເຕັມໄປດ້ວຍໄຂ່ແມ່ທ້ອງປາກຂໍ ທີ່ໂຕແກ່ຂອງພະຍາດປາກຂໍໄຂ່ອອກມາ ໄຂ່ແມ່ທ້ອງປາກຂໍ ຖືກຝັງຢູ່ໃນດິນ ແລ້ວແຕກ ອອກເປັນຕົວອ່ອນ ( ຕົວໜອນ ) ແລະ ຕົວອ່ອນດັ່ງກ່າວ ກໍຈະໄປຊີເຂົ້າຕາມຜິວໜັງຂອງຄົນເຮົາ ແລ້ວເຂົ້າສູ່ຮ່າງກາຍ .



ອີກຢ່າງໜຶ່ງ, ປະຊາຊົນທີ່ຢູ່ພາຍໃນບ້ານ ກໍຈະຕິດພະຍາດປາກຂໍ, ໂດຍສະເພາະເມື່ອເຮົາຍ່າງດ້ວຍຕີນເປົ່າ. ຢູ່ໃນ ພາບນີ້ ພວກເຮົາເຫັນຜູ່ຍິງ ບໍ່ໄດ້ໃສ່ເກີບ ( ຕີນເປົ່າ ) ກຳລັງເຮັດສວນ. ແມ່ທ້ອງປາກຂໍກໍອາດຈະ ຊີເຂົ້າໜັງຕີນຂອງລາວໄດ້ .



ໂຕອ່ອນຂອງແມ່ທ້ອງປາກຂໍ ສາມາດຊີເຂົ້າພາກສ່ວນໃດໜຶ່ງຂອງໜັງຄົນເຮົາ ເມື່ອຖືກສຳຜັດກັບຂີ້ດິນທີ່ແປດເປື້ອນກັບພະຍາດປາກຂໍ, ສ່ວນໃຫຍ່ ພະຍາດປາກຂໍຈະຊີເຂົ້າໜັງຕີນ . ເມື່ອເຂົ້າສູ່ຮ່າງກາຍຄົນເຮົາແລ້ວ, ພະຍາດປາກຂໍຈະຜ່ານເຂົ້າຫາປອດ, ລຳໄສ້ ແລ້ວກໍເຕີບ ໃຫຍ່ຂະຫຍາຍຕົວ ກາຍເປັນແມ່ທ້ອງໂຕແກ່ .

# ອາການຕ່າງ ໆ ຂອງຄົນ ທີ່ມີແມ່ທ້ອງເປັນແນວໃດ ?

ໃນກໍລະນີ ຂອງ :

ການຕິດເຊື້ອແມ່ທ້ອງແບບຮຸນແຮງ ( ມີແມ່ທ້ອງກາຝາກຈໍານວນຫຼວງຫຼາຍ ) :








# ຈະປິ່ນປົວພະຍາດແມ່ທ້ອງໄດ້ແນວໃດ ?

## ຖ້າທ່ານສົງໄສວ່າມີພະຍາດແມ່ທ້ອງ ໃຫ້ໄປປຶກສານໍາແພດໝໍທັນທີ!

ແນະນໍາໃຫ້ໃຊ້ຢາ ໃນການປິ່ນປົວການຕິດເຊື້ອພະຍາດແມ່ກາຝາກລໍາໄສ້ . ຄວນຈະຮັບຢາປິ່ນປົວພະຍາດແມ່ທ້ອງຈາກແພດໝໍ. ຄູກໍ່ສາມາດໃຫ້ຢາປິ່ນປົວພະຍາດແມ່ທ້ອງໄດ້ໃນ ກໍລະນີປິ່ນປົວແບບເປັນຂະ ບວນການໃນໂຮງຮຽນ ຫຼືໃນບ້ານຂອງທ່ານ.

### ຢາ ເມບັງດາໂຊນ



- ຢາ ເມບັງດາໂຊນ (MEBENDAZOLE) : ກິນ 500 ມລກ / ທຸກ ໆ 6 ເດືອນ .
- ຫຍໍ້ກ້ອນຢາກ່ອນກິນ.



# ຈະປ້ອງກັນການຕິດເຊື້ອແມ່ກາຝາກ ທີ່ຕິດມາຈາກດິນໄດ້ແນວໃດ?

ທຸກໆຄອບຄົວຄວນມີ ວິດຖ່າຍ, ຖ້າບໍ່ມີວິດ ຖ່າຍ, ເວລາ ໄປຖ່າຍ ຕ້ອງຂຸດດິນ ຖົມ ແລະ ໃຫ້ຫ່າງໄກ ຈາກເຮືອນຢູ່





ວິທີປ້ອງກັນການຕິດເຊື້ອແມ່ທ້ອງລຳໄສ້ທີ່ງ່າຍດາຍ ແມ່ນ :

ຄວນຖ່າຍອາຈົມໃສ່ວິດຖ່າຍທຸກ ໆ ຄັ້ງ . ການໃຊ້ວິດ ຖ່າຍ ເປັນວິທີຮັດສາອະນາໄມສິ່ງແວດລ້ອມທີ່ດີ .

ຖ້າບໍ່ມີວິດຖ່າຍ ສຳລັບຖ່າຍອາຈົມ , ຕ້ອງໄປຖ່າຍໃຫ້ ຮ່າງໄກຈາກເຮືອນຢູ່, ຕ້ອງຂຸດຂຸມເພື່ອຖ່າຍອາຈົມໃສ່ ແລະ ເມື່ອຖ່າຍອາຈົມແລ້ວ ໆ ຕ້ອງຖົມດ້ວຍດິນໃຫ້ດີ



ຕ້ອງລ້າງມືຂອງທ່ານ ດ້ວຍສະບູ ທຸກໆ ຄັ້ງຫຼັງຈາກອອກມາແຕ່ສ້ວມ ຖ່າຍ ແລະກ່ອນຈະກິນອາຫານ . ການລ້າງມືຈະຫຼີກເວັ້ນໄດ້ ເອົາໄຂ່ ແມ່ທ້ອງອອກຈາກມືຂອງທ່ານ .




ລ້າງຜັກໃຫ້ສະອາດ ແລະປອດໄພ : ຕ້ອງ ລ້າງດ້ວຍນ້ຳຕອງທີ່ໃສສະອາດ, ນ້ຳປະ ປາ ຫຼື ນ້ຳຕົ້ມທີ່ສຸກດີແລ້ວຍິ່ງເປັນການດີ , ຫຼືຄວນຕື່ມ ນ້ຳສົ້ມ ໃສ່ເລັກໜ້ອຍ ຍິ່ງດີ ເພື່ອຮັບປະກັນບໍ່ໃຫ້ຕິດເຊື້ອກາຝາກ ແລະ ໄຂ່ ແມ່ທ້ອງລຳໄສ້ .




ຈົ່ງຕັດເລັບມື ແລະ ເລັບຕີນ ຂອງ ທ່ານໃຫ້ສັ້ນ ໆ , ເພາະວ່າເລັບ ຕີນ-ເລັບມືຍາວນັ້ນ ເປັນບ່ອນລີ້ ຊ່ອນ ຂອງໄຂ່ເຊື້ອແມ່ກາຝາກໄດ້




ທຸກ ໆ ຄັ້ງ ເມື່ອອອກນອກ ເຮືອນ ຕ້ອງໃສ່ເກີບສຸບ ຫຼື ເກີບແຕະ ເພື່ອບໍ່ໃຫ້ ຕີນຂອງທ່ານ ກະ ທົບໂດຍກົງ ກັບພື້ນ ດິນ .






Design by Chongkham Phonekeo,
Printing by VIP Graphic Design Tel: 856-21 217526, E-mail: luesakj@laonet.net

ອົງການອະນາໄມໂລກ
WHO

supported by the
"Direction de la Cooperation au
Developpement"
"Ministere des affaires Etrangeres"
Luxembourg

ກະຊວງສາທາລະນະສຸກ
Ministry of Health
Lao PDR